ພິທີລົງນາມ ການຮ່ວມມືໃນການໃຫ້ບໍລິການ E-STATEMENT ຜ່ານແອັບພິເຄຊັ່ນ BCEL ONE ລະຫວ່າງ ທຄຕລ ແລະ ບໍລິສັດ ກຸງສີ ບໍລິການເຊົ່າສິນເຊື່ອ ຈຳກັດ ພ້ອມດ້ວຍສະຖາບັນ ການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ກຸງສີ ຈຳກັດ





ໃນຕອນບ່າຍ ຂອງວັນອັງຄານ ທີ 21 ມັງກອນ 2025, ທີ່ ສຳນັກງານໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ຈັດພິທີລົງນາມ ການຮ່ວມມືໃນການໃຫ້ບໍລິການ E-Statement ຜ່ານແອັບພິເຄຊັ່ນ BCEL One ລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ບໍລິສັດ ກຸງສີ ບໍລິການເຊົ່າສິນເຊື່ອ ຈຳກັດ ພ້ອມດ້ວຍ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ກຸງສີ ຈຳກັດ ຢ່າງເປັນທາງການ, ໃຫ້ກຽດຕາງໜ້າລົງນາມການຮ່ວມມືໃນຄັ້ງນີ້ໂດຍ **ທ່ານ ນັນທະລາດ ແກ້ວປະເສີດ, ຮອງຜູ້ອຳນວຍການທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ** ແລະ **ທ່ານ ມະນຸນ ພຸດທະວົງ ຜູ້ອຳນວຍການ ບໍລິສັດ ກຸງສີ ບໍລິການເຊົ່າສິນເຊື່ອ ຈຳກັດ** ໂດຍ ມີຄະນະພະແນກ, ຄະນະສູນ ແລະ ຄະນະສາຂາ ຕະຫຼອດຮອດພະນັກງານຂອງທັງ 2 ຝ່າຍກໍ່ໄດ້ເຂົ້າຮ່ວມເປັນສັກຂີພະຍານ ຢ່າງພ້ອມພຽງ;



ຖືໄດ້ວ່າເປັນຄັ້ງທຳອິດທີ່ ທະນາຄານ ການຄ້າ ຕ່າງປະເທດລາວ ມະຫາຊົນ (BCEL) ໄດ້ເປີດການໃຫ້ບໍລິການ **E-STATEMENT** ຜ່ານທາງອອນລາຍຢ່າງເປັນທາງການ ເຊິ່ງໄດ້ມີການຮ່ວມມືການໃຫ້ບໍລິການດັ່ງກ່າວຮ່ວມກັບ ບໍລິສັດ ກຸງສີ ເຊົ່າສິນເຊື່ອ ຈຳກັດ ແລະ ສະຖາບັນການເງິນ ຈຸລະພາກ ທີ່ບໍ່ຮັບເງິນຝາກ ກຸງສີ ຈຳກັດ ໂດຍບໍລິການດັ່ງກ່າວ ເປັນການສະໜອງ ຂໍ້ມູນການເຄື່ອນໄຫວບັນຊີຂອງລູກຄ້າຜູ້ນຳໃຊ້ BCEL One ທີ່ ມີຄວາມປະສົງຢາກຊື້ຜ່ອນ ສິນຄ້າ ຫຼື ກູ້ຢືມເງິນນຳ ບໍລິສັດ ເຊົ່າສິນເຊື່ອ ຫຼື ສະຖາບັນການເງິນ ທີ່ເຂົ້າຮ່ວມໂຄງການກັບ ທຄຕລ ໝາຍຄວາມວ່າ ບໍລິສັດເຊົ່າສິນເຊື່ອ ຫຼື ສະຖາບັນການເງິນທີ່ມີການຮ່ວມມືກັບ ທຄຕລ ບໍ່ຈຳເປັນຕ້ອງໃຫ້ລູກຄ້າ ເຂົ້າໄປຂໍ STATEMENT ຫຼື ບັນຊີສຳຮອງ ຢູ່ທີ່ສາຂາ ຫຼື ໜ່ວຍບໍລິການຂອງ BCEL ໃຫ້ເສຍເວລາອີກຕໍ່ໄປ ພຽງແຕ່ແນະນຳ ໃຫ້ລູກຄ້າເຂົ້າໄປຢັ້ງຢືນຕົວຕົນຜ່ານແອັບພິເຄຊັ່ນ BCEL ONE ແລ້ວ STATEMENT ກໍ່ຈະຖືກສົ່ງໄປຍັງ E-mail ຂອງບໍລິສັດ ຢ່າງອັດຕະໂນມັດ.



BCEL ຮູ້ສຶກຍິນດີ ແລະ ພາກພູມໃຈ ທີ່ໄດ້ເປັນສ່ວນໜຶ່ງໃນການຕອບສະໜອງຄວາມ ທັນສະໄໝ ແລະ ສະດວກສະບາຍໃຫ້ແກ່ລູກຄ້າ ຂອງທັງສອງຝ່າຍຂອງພວກເຮົາຈາກການຮ່ວມມື ຄັ້ງນີ້ ແລະ ກໍ່ຂໍສະແດງຄວາມຂອບໃຈເປັນຢ່າງສູງ ມາຍັງລູກຄ້າທຸກທ່ານ ທີ່ໄດ້ເລືອກໃຊ້ບໍລິການ ພວກເຮົາຕະຫຼອດມາ ແລະ BCELຈະສືບຕໍ່ ພັດທະນາທຸກຜະລິດຕະພັນ ຢ່າງບໍ່ຢຸດຢັ້ງ ໂດຍ ເນັ້ນໃສ່ຄວາມທັນສະໄໝ, ສະດວກສະບາຍ, ມີ ຄວາມປອດໄພສູງ ສາມາດກວດສອບໄດ້ ແລະ ໄດ້ມາດຕະຖານສາກົນ.





ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ທັນສະໄໝ ອ່ອງໄວ ໝັ້ນໃຈ